**ໝາຍເລກເຄສ**:

ບັນທຶກການຊ່ວຍເຫຼືອຈາກລັດທະບານຂອງຄາວຕີ້ສະແດງໃຫ້ເຫັນວ່າ ທ່ານໄດ້ຮັບເງິນຊ່ວຍເຫຼືອເກີນ, ແລະຖືກລະງັບ, ເປັນຜົນມາຈາກການຈ່າຍເງິນຊ່ວຍເຫຼືອເກີນ ແລະ/ຫຼື ການໃຫ້ສະຫວັດດີການ CalFresh (ເຊິ່ງເອີ້ນວ່າສະແຕມອາຫານ) ເກີນຈຳນວນທີ່ຈ່າຍຊ້າຕໍ່ໄປນີ້ຈະຖືກສົ່ງໄປໃຫ້ Franchise Tax Board ເພື່ອຕັດເງິນຈາກເງິນຄືນພາສີອາກອນ. ແຈ້ງການນີ້ອາດຈະບໍ່ໄດ້ສະແດງເງິນທີ່ຈ່າຍຊ້າທີ່ທ່ານຕິດໜີ້.

**Cash Aid $** **CalFresh $**

ເນື່ອງຈາກວ່າຈຳນວນເງິນດັ່ງກ່າວຍັງບໍ່ທັນໄດ້ຈ່າຍຄືນ, Franchise Tax Board ຈະເກັບເງິນຄືນພາສີອາກອນຈາກລັດທີ່ທ່ານຄາດວ່າຈະໄດ້ເອົາໄວ້, ຫຼືເງິນຖືກລາງວັນຫວຍ (ຕາມທີ່ໄດ້ຮັບອະນຸຍາດກົດໝາຍ StateController ຂອງລັດຄາລິຟໍເນຍມາຕຣາທີ 12419.5, ແລະປຶ້ມຄູ່ມືນະໂຍບາຍການປະຕິບັດງານຂອງ Department of Social Services ໃນລັດຄາລິຟໍເນຍ - ມາຕຣາທີ່ 20-400), ເພື່ອຊ່ວຍໃນການຈ່າຍເງິນທີ່ຕິດໜີ້ທີ່ຈ່າຍຊ້ານີ້ຄືນ. ການກະທຳນີ້ຈະໃຊ້ ເຖິງແມ່ນວ່າທ່ານຈະຍື່ນຈ່າຍພາສີຮ່ວມກັບຄູ່ສົມລົດທີ່ເປັນບໍ່ມີໜີ້ສະຫວັດດີການຕິດຄ້າງຢູ່ກໍ່ຕາມ.

<u>ສິດທິໃຫ້ມີການທົບທວນທາງດ້ານບໍລິຫານກ່ຽວກັບການກະທຳນີ້ຂອງທ່ານ</u>

ຖ້າທ່ານ, ຫຼືຄູ່ສົມລົດຂອງທ່ານ (ໃນກໍລະນີທີ່ຍື່ນຈ່າຍພາສີຮ່ວມກັນ), ບໍ່ເຫັນດີກັບການກະທຳໃດໆ ທີ່ຈະເກີດຂຶ້ນ, ທ່ານສາມາດຮ້ອງຂໍໃຫ້ມີການທົບທວນຕໍ່ໜ້າຕົວແທນຂອງຄາວຕີ້ໄດ້. ທ່ານຕ້ອງຮ້ອງຂໍໃຫ້ມີການທົບທວນນີ້ໂດຍຕິດຕໍ່ຄາວຕີ້ທີ່ລະບຸໄວ້ຂ້າງເທິງ. ໃນການທົບທວນນີ້ ທ່ານອາດຈະມີທະນາຍຄວາມກໍ່ໄດ້ , ແລະທ່ານມີສິດສະແດງຫຼັກຖານ, ແລະກວດສອບເອກະສານຕ່າງໆ ທີ່ທາງຄາວຕີ້ໃຊ້ໃນການຄິດໄລ່ຈຳນວນທີ່ຕິດໜີ້ໄດ້. ເພື່ອຂໍເອົາສຳເນົາແຈ້ງການປະຕິບັດ (Notice of Action) ສະບັບແຮກທີ່ກ່າວເຖິງເຫດຜົນ ແລະການຄຳນວນເງິນຈ່າຍເກີນ, ຕິດຕໍ່ຄາວໃຫ້ຕີ້ (ທີ່ລະບຸໄວ້ຂ້າງເທິງ).

ເຫດຜົນທີ່ເປັນໄປໄດ້ບາງຢ່າງທີ່ທ່ານສາມາດບໍ່ເຫັນດີນຳແມ່ນ: (1) ທ່ານບໍ່ເຄີຍໄດ້ຮັບເງິນສະຫວັດດີການຊ່ວຍເຫຼືອດ້ານເງິນສົດ ຫຼື CalFresh; (2) ຈຳນວນເງິນທີ່ສະແດງວ່າຕິດໜີ້ນີ້ບໍ່ຖືກຕ້ອງ; (3) ກົດໝາຍວ່າດ້ວຍການລົ້ມລະລາຍທີ່ມີຜົນບັງຄັບໃຊ້ໃນເວລາທີ່ທ່ານຍື່ນຂໍລົ້ມລະລາຍໄດ້ລຶບຈຳນວນເງິນທີ່ສະແດງວ່າທ່ານຕິດໜີ້; ແລະ (4) ຄາວຕີ້ບໍ່ປະຕິບັດຕາມກົດໝາຍຂອງລັດ, ແລະກົດລະບຽບກ່ຽວກັບສະຫວັດດີການຊ່ວຍເຫຼືອດ້ານເງິນສົດຫຼື CalFresh, ເມື່ອຄິດໄລ່ວ່າທ່ານເປັນໜີ້ເທົ່າໃດ

ເພື່ອໃຫ້ເວລາຄາວຕີ້ເຮັດການແກ້ໄຂທີ່ຈຳເປັນຕໍ່ບັນທຶກຂອງພວກລາວ ກ່ອນຫັກລົບຈາກເງິນຄືນພາສີອາກອນຈາກລັດຂອງທ່ານ, ຫຼືເງິນອື່ນໆ ທີ່ລັດຄາລິຟໍເນຍຕິດໜີ້ທ່ານ, ທາງຄາວຕີ້ທີ່ລະບຸໄວ້ຂ້າງເທິງຕ້ອງໄດ້ຮັບການຮ້ອງຂໍຂອງທ່ານພາຍໃນ **30** ວັນນັບຈາກວັນທີແຈ້ງການສະບັບນີ້. ຢ່າງໃດກໍ່ຕາມ, ທ່ານກໍ່ສາມາດຮ້ອງຂໍໃຫ້ມີການທົບທວນເຄສຂອງທ່ານໄດ້ໃນເວລາໃດກໍ່ໄດ້ຕະຫລອດ ປີ, ຕາມທີ່ໄດ້ຮັບອະນຸຍາດຈາກປຶ້ມຄູ່ມືນະໂຍບາຍຂອງ Department of Social Services ຂອງລັດຄາລິຟໍເນຍ - ມາຕຣາ 20-407

ທ່ານ, ຫຼືຄູ່ສົມລົດຂອງທ່ານ, ຍັງສາມາດຍື່ນຄຳຮ້ອງຕໍ່ສານຊັ້ນຕົ້ນໃຫ້ຢຸດເຊົາການກະທຳນີ້ແລະ ໃຫ້ສານຕັດສິນວ່າຈຳນວນເງິນທີ່ຕິດໜີ້ທີ່ສະແດງນັ້ນຖືກຕ້ອງຫຼືບໍ່ ສຳລັບຂໍ້ມູນເພີ່ມເຕີມ ກະລຸນາຕິດຕໍ່ຄາວຕີ້ທີ່ລະບຸຢູ່ຂ້າງເທິງໃນແຈ້ງການນີ້.